# ວັນວານຍັງຫວານຢູ່



- ຕອນທີ່໑໑:   ນັດພົບສາວ ອຸ່ຍມາແປກ
- ຕອນທີ່໑໘:   ຮຽນພາສາອັງກິດນຳຂ້ອຍບໍ
- ຕອນທີ່໑໓:   ຫມາກມ່ວງຫມາກນັດ ໂອຍຈັ່ງແມ່ນມີແຕ່ແນວແຊບໆ
- ຕອນທີ່໑໔:   ປີໃຫມ່ລາວ ຂໍຫົດນ້ຳຈັກບາດແດ່
- ຕອນທີ່໑໕:   ໄຂປະຕູ ບັກລູກເຂີຍ

## ຕອນທີ່໑໑ ນັດພົບສາວ ອຸ່ຍມາແປກ

ຫວ່າງຫລັງຈາກວັນວາໄລນໄທມຫນ້ອຍນຶ່ງ ເຈົ້າຈື່ບໍ່?
ຂ້ອຍຂຽນເຈ້ຍນ້ອຍນຶ່ງຝາກມັດທຸທີ່ໄປຮຽນອັງກິດນຳຂ້ອຍມາໃຫ້ເຈົ້າໃນຕອນເຊົ້າ ນັດແນະວ່າ
ຢາກພົບນຳເຈົ້າຕອນເກົ້າໂມງ ຂໍໃຫ້ຢູ່ເຮືອນລໍຖ້າຂ້ອຍດ້ວຍ
ຕາມທຳມະດາທຸກໆມື້ຂ້ອຍສອນຫນັງສືຈີນຮອດສິບໂມງເຄິ່ງ ແຕ່ມື້ນັ້ນຂໍຍົກໆເປັນພິເສດ
ຊົ່ວໂມງຕໍ່ໄປບໍ່ສອນ ສ່ວນຊົ່ວໂມງແປດເຄິ່ງຫາເກົ້າເຄິ່ງ ກະສອນແຕ່ເຄິ່ງຊົ່ວໂມງກະພໍ
ດ້ວຍວ່າເລື້ອງຄວາມຮັກຍ່ອມສຳຄັນກ່ວາເລື້ອງອື່ນໃດທັງສິ້ນ ແຮະໆຄະຕິຂ້ອຍ
ເຈົ້າວ່າຍັ້ງມຍອດບໍ່? ພໍໃກ້ຊິຮອດເກົ້າໂມງ ຂ້ອຍກະບອກນັກຮຽນວ່າ ພໍແລ້ວເດີສຳລັບມື້ນີ້
ຈາກນັ້ນກໍພວດພາດອອກຫ້ອງໄປເປັນຜູ້ທຳອິດ ເດີນລິ່ວໆມາອາຄານເຈົ້າໂລດ ຖ້າເຈົ້າເບິ່ງໂມງ
ເຈົ້າຈະຮູ້ວ່າ ຂ້ອຍມາຮອດພໍດີເກົ້າໂມງຕົງປຸ່ງບ ບໍ່ຂາດບໍ່ເກີນຈັກວິນາທີເລີຍ
ເວົ້າແລ້ວເຈົ້າຊົງຊິແປກໃຈ ແມ່ນບໍ່? ທີ່ຂ້ອຍນັດພົບເຈົ້າແນວນີ້ ທັງທີ່ຊິວ່າແລ້ວ
ເຮົາສອງກໍເຫັນຫນ້າແລະເວົ້າຈາກັນເກືອບທຸກມື້
ບາງມື້ເອົາແຕ່ເຊົ້າໆຍັນຮອດເກົ້າໂມງແລງເລີຍກະມີ ແຕ່ກໍຢ່າງວ່າ ແນວມື້ກ່ອນນັ້ນມັນກໍບໍ່ຄືມື້ນີ້

ໃຈຂ້ອຍແລ້ວໂລດຢາກເຫັນຢາກແຍງເຈົ້າ ແມ້ກະທັ່ງເວລາກິນ ເວລານອນ ເວລາແຕ່ງອາຫານ
ເວລານັ່ງຊື່ໆ ເວລາຍ່າງໄປຍ່າງມາ ຈົນຮອດເວລາອາບນ້ຳພຸ້ນນະ ແຕ່ສຳລັບມື້ນັ້ນ
ຂ້ອຍມາຫາເຈົ້າເພາະມີເລື້ອງຂັດຫມາກກະດອງໃຈຢູ່ຢ່າງນຶ່ງຄືວ່າ ບາດຂ້ອຍເບິ່ງໄປເບິ່ງມາ
ຈັກແມ່ນເຈົ້າຮັກຂ້ອຍຫລືບໍ່ ກໍບໍ່ຮູ້?
ເພາະເຈົ້າບາງເທື່ອກະເຮັດຊື່ໆຄືຂ້ອຍບໍ່ມີຄວາມຫມາຍຫຍັງຕໍ່ເຈົ້ານີ້ລະ

ມື້ນັ້ນເຈົ້າຈື່ບໍ່? ຂ້ອຍອະທິບາຍຂະຫຍາຍຄວາມໃນໃຈຂອງຂ້ອຍທີ່ມີຕໍ່ເຈົ້າຈົນຫມົດເປືອກຫມົດພຸງ
ຫວັງຊິໃຫ້ເຈົ້າເຫັນໃຈແຕ່ບາດແລ້ວກະຄືໆເກົ່າ ດີຫນ້ອຍນຶ່ງແຕ່ວ່າ ເຖິງເຈົ້າບໍ່ຕອບຮັກຂ້ອຍ
ແຕ່ເຈົ້າກໍຮັບຮັກຂ້ອຍໄວ້ພິຈາຣະນາ ເບິ່ງໆແລ້ວກະຄືມື້ຂ້ອຍມາຫລີ້ນນຳເຈົ້າຢູ່ເຮືອນຄົວ
ຂ້ອຍກັ້ນໃຈບອກວ່າ ຖ້າເຈົ້າເອີ່ຍຄຳດຽວວ່າ ບໍ່ຮັກຂ້ອຍ ຂ້ອຍຈະບໍ່ຜະເຍີຫນ້າມາໃຫ້ເຈົ້າເຫັນອີກ
ຈົນຕລອດຊົ່ວຊີວິດ ເວົ້າປານນຳຫນັງເອົາໂລດ ດີແຕ່ເຈົ້າບໍ່ເອີ່ຍແນວນັ້ນ ຄັນບໍ່ຊັ້ນ
ຢ້ານຂ້ອຍໄຫ້ຂີ້ມູກໂປ່ງ ເພາະຊິບໍ່ໄດ້ມາລົມຫລີ້ນນຳເຈົ້າອີກຕໍ່ໄປ ເວົ້າແລ້ວຂ້ອຍນີ້ກະເສັງແນວນຶ່ງ
ຄືບາດເວົ້າຫຍັງອອກໄປແລ້ວ ຊິບໍ່ເຮັດຕາມ ກະກະດາກໃຈຕົນເອງ

ທ້າຍທີ່ສຸດຜ່ານໆມາ ກະເລີຍເຮັດຕາມຄຳເວົ້າທີ່ບາງຄັ້ງກໍບໍ່ທັນລະມັດລະວັງຂອງຕົນເອງ
ແຕ່ກໍຣະນີເຈົ້າ ກະບໍ່ແມ່ນວ່າ ຂ້ອຍຊິສຸ່ມສີ່ສຸ່ມຫ້າເວົ້າໄປ
ຂ້ອຍກໍເຊື່ອສາຍຕາຮີບຮີ່ຂອງຂ້ອຍຢູ່ນ້ອງໆຮ້ອຍເປີເຊັນວ່າ
ຄົງຊິເປັນໄປບໍ່ໄດ້ດອກທີ່ເຈົ້າຈະສະລັດຮັກໄປຈາກຂ້ອຍ
ໃນເມື່ອລົດນິຍົມແລະທັສນະຄະຕິຂອງເຮົາສອງ ມີຫລາຍອັນຕົງກັນປຸ່ງບເລີຍ ເສັງອັນດຽວແຕ່ວ່າ
ໃນຂະນະນັ້ນ ບໍ່ເປັນອັນຈະແຈ້ງໃຈເຈົ້າວ່າ ໃຈຂ້ອຍມັນຈະຢູ່ນຳເຈົ້າທັງສີ່ຫ້ອງຫົວໃຈບໍ່?
ເລື້ອງນີ້ຂ້ອຍກໍຈົນປັນຍາທີ່ຈະຊີ້ແຈງຖແລງໄຂໃຫ້ເຈົ້າເຊື່ອວ່າ
ຫົວໃຈຂ້ອຍທັງສີ່ຫ້ອງຢູ່ນຳເຈົ້າຫມົດ ເພາະຕອນນັ້ນເຈົ້າຫລີ້ນແຕ່ລູກບໍ່ເຊື່ອ ແລະກະບໍ່ເຊື່ອ
ຈົນຂ້ອຍເມື່ອຍ ນີ້ຖ້າບໍ່ແມ່ນວ່າຂ້ອຍຮັກເຈົ້າຈົນຫມົດຈິດຫມົດໃຈແລ້ວຄືວ່າ
ຈັກຂ້ອຍຊິຕິດປີກໄປທາງໃດແລ້ວກໍບໍ່ຮູ້ປານນີ້?

ຕອນນັ້ນຂ້ອຍຂື້ນຊະຕາຊວຍຫລືບໍ່ກໍບໍ່ຈັກ ຫມູ່ທີ່ນອນຫ້ອງດຽວກັນ ກິນເຂົ້ານຳກັນ
ໄປໃສມາໃສນຳກັນ ເສືອກມັກໃຜບໍ່ມັກ ພັດມາມັກເຈົ້າ
ຈົນໃນທີ່ສຸດກໍກາຍມາເປັນຄູ່ແຂ່ງທີ່ອອກຫນ້າອອກຕາຂ້ອຍເລີຍ ຫລີ້ນເອົາຂ້ອຍປວດຫົວຂນາດ
ເພາະຕ້ອງຕິດຈຣວດມາເຮືອນເຈົ້າ ຫລັງຈາກກິນເຂົ້າແລງແລ້ວເກືອບວ່າທຸກໆແລງ
ແລງໃດເຫັນລາວຢູ່ເຮືອນເຈົ້າກ່ອນ ຂ້ອຍກໍກາຍເລີຍ ທັງທີ່ໃຈນັ້ນຢາກເຂົ້າມາຫາເຈົ້າ
ຈົນບລເປັນອັນຊິຢູ່ ແຕ່ບາດຮອດແລງທີ່ຂ້ອຍຢູ່ເຮືອນເຈົ້າກ່ອນ
ລາວເຫັນລາວພັດເຂົ້າມາຢ່າງຫນ້າຊື່ໆ
ຈົນຂ້ອຍຕ້ອງອອກຫົວຄິດວາງແຜນການແຜນໃຫມ່ຊິເວົ້ານຳເຈົ້າອີກ

ປະມານບ່າຍໆຂອງມື້ນຶ່ງ ຂ້ອຍມາຫລີ້ນນຳເຈົ້າຢູ່ເຮືອນ ຕອນນັ້ນບໍ່ມີໃຜຢູ່ ມີແຕ່ເຈົ້າຜູ້ດຽວ
ເປັນອັນວ່າເຮົາສອງມີໂອກາດໄດ້ລົມກັນຢ່າງເຕັມທີ່
ທຳອິດຂ້ອຍເວົ້າເລື້ອງປ້າຂອງຂ້ອຍໄປດູຫມໍມາວ່າ ຂ້ອຍຈະໄດ້ກັບຄືນທາງໃຕ້
ແລະເພິ່ນກໍຢອດນ້ຳຕານອີກວ່າ ຂ້ອຍຈະໄປໄດ້ດີບໄດ້ດີຢູ່ຕ່າງແດນ
ຫລີ້ນເອົາຂ້ອຍຍີ້ມແປ່ນຫມົດມື້ເລີຍ ຕໍ່ມາຂ້ອຍກໍເລົ່າເລື້ອງສັ້ນຂອງຟີລີປິນ ທານໃສໃນມາຍອງ
ໃຫ້ຟັງ ເນື້ອເລື້ອງມີວ່າ ອະເມຣິກາຫມໍນຶ່ງກັບຜູ້ນຳທ່ຽວມາທ່ຽວມາຍອງຊຶ່ງເປັນບ່ອນທີ່ແຫ້ງແລ້ງ
ຂາດແຄນນ້ຳຫລາຍ ຊາວບ້ານຕ້ອງໄດ້ເດີນທາງໄກໆເພື່ອໄປເອົານ້ຳມາກິນມາໃຊ້
ຕອນຫມໍອະເມຣິກາມາມາຍອງນັ້ນ ຫມໍບໍ່ຮູ້ວ່າ ບ່ອນນີ້ຂາດແຄນນ້ຳຫລາຍ ພໍເມື່ອຫມໍຢາກນ້ຳ
ຫມໍກະໃຫ້ຜູ້ນຳທ່ຽວພາໄປຂໍນ້ຳກິນນຳຄອບຄົວນຶ່ງ ກິນບໍ່ກິນລ້າ ຫມໍທັງເອົາມາລ້າງຫນ້າ
ບ້ວນປາກ ແລະຖອກເທໃສ່ຮ່າງຄີງເປັນຫລາຍກະຕຸ໋ກ ບາດຫມໍໄປ
ຫມໍຍັງຮ່າຍໃສ່ກະຕຸ໋ກຂອງຫມໍໄປນຳອີກ ມາຮອດຕອນຫລັງໆພີ້ຫມໍຈຶ່ງຮູ້ວ່າ
ນ້ຳແຕ່ລະຕຸກທີ່ຄອບຄົວນັ້ນເອົາໃຫ້ຫມໍ ຫາມາໄດ້ດ້ວຍຄວາມຍາກລຳບາກພຽງໃດ
ບໍ່ພຽງລະຍະທາງທີ່ໄກເທົ່ານັ້ນ
ຍັງຕ້ອງໃຊ້ເວລາເປັນຫລາຍຊົ່ວໂມງໂຕ່ງເອົານ້ຳທີ່ໄຫລຊືມອອກມາຈາກຫນ້າຝາເທື່ອລະຢົດ
ຊຶ່ງເລື້ອງນີ້ບໍ່ຕ່າງຫຍັງກັບນ້ຳໃຈເຈົ້າທີ່ເຖີງເຈົ້າຈະກ່ຳກືນເຈັບປວດພຽງໃດ
ເຈົ້າກໍບໍ່ເຄີຍເອີ່ຍປາກເວົ້າ ມີແຕ່ເຫັນໃຈຜູ້ອື່ນຕລອດມາ ເຈົ້າຮູ້ບໍ່?
ກ່ວາໆຂ້ອຍຊິວົກເຂົ້າເລື້ອງທີ່ຂ້ອຍຢາກເວົ້າ ຂ້ອຍກໍອ້ຳອື້ງຫລາຍເທື່ອ ແນວບໍ່ຮູ້ວ່າ
ເຈົ້າຈະຮັກລາວຫລືບໍ່? ສົມມຸດເຈົ້າຮັກລາວແລ້ວ ສິ່ງທີ່ຂ້ອຍເວົ້າໄປ ເຈົ້າກໍຄົງຊິຫົວຂວັນຂ້ອຍຊ້ຳ
ແຕ່ເຖີງຢ່າງໃດ ຂ້ອຍກໍຕັດສິນໃຈບອກເຈົ້າຈົນໄດ້
ເລື້ອງກໍບໍ່ມີຫຍັງຫລາຍຄືວ່າໃຫ້ເຈົ້າພະຍາຍາມຕີຕົວອອກຫ່າງຈາກລາວ ເມື່ອລາວມາຫລີ້ນນຳ

ກໍໃຫ້ຫວັນເວົ້ານຳ ສ່ວນເຈົ້າໃຫ້ເຮັດຄືຄາຮຽນຫນັງສື ທັງນີ້ກໍເພື່ອລາວຈະຮູ້ເສັງທີວ່າ
ເຈົ້າບໍ່ຮັກລາວ ແລ້ວລາວກໍຄົງຈະຖອຍທັບໄປເອງ
ທຳອິດເຈົ້າກໍບໍ່ຢາກເຮັດແນວນັ້ນເພາະມັນບໍ່ງາມ ແນວຮູ້ຈັກກັນມາແຕ່ດົນ
ແຕ່ທົນສູ້ເຫດຜົນແລະຄຳອ້ອນວອນຂອງຂ້ອຍບໍ່ໄຫວ ເຈົ້າຈຶ່ງເອີ່ງນຳ
ຊຶ່ງຜົນກໍຄືລາວກໍເຂົ້າໃຈໄປເອງໃນເວລາຜ່ານໄປບໍ່ດົນ ແຕ່ມີເລື້ອງຫນ້າຢາກຫົວ
ຊຶ່ງຂ້ອຍຮູ້ໃນພາຍຫລັງວ່າ ລາວກະບອກເຈົ້າແນວນັ້ນ ດີແຕ່ເຈົ້າຮັກຂ້ອຍ ບໍ່ຮັກລາວ
ເລື້ອງມັນຈຶ່ງລົງເອີຍດ້ວຍດີ ແຕ່ມັນກະດີສຳລັບຂ້ອຍຜູ້ດຽວດອກ
ສ່ວນລາວໃຫ້ລໍຖ້າເອົາເອື້ອຍເຈົ້າຜູ້ຍັງຢູ່ເມືອງລາວພຸ້ນສະ

## ຕອນທີ໑໘ ຮຽນພາສາອັງກິດນຳຂ້ອຍນໍ

ປະມານເດືອນສາມນີ້ລະ ຂ້ອງຂ້ອຍວ່າຢາກໃຫ້ສອນອັງກິດໃຫ້
ຂ້ອຍກະເລີຍວ່າສອນກະສອນແຕ່ຕ້ອງໄປຮຽນຢູ່ເຮືອນເຈົ້າ ຫວັງວ່າຊິໃຫ້ເຈົ້າແລະຫວັນຮຽນນຳ
ແຕ່ບາດສອນແທ້ ເອົາໄປເອົາມາ ມີແຕ່ນ້ອງຂ້ອຍກັບຫວັນຮຽນ ບາດເຈົ້າຫລີ້ນລູກບໍ່ຮຽນຢ່າງດຽວ
ຕອນຂ້ອຍໄປສອນໃຫມ່ໆນັ້ນ ຂ້ອຍຕ້ອງຕໍ່ສູ້ກັບແນວຄິດຕ່ຳຄ້ອຍນ້ອຍໃຈ
ແນວວ່າເວລາບ່າຍໂມງນຶ່ງຫາສອງໂມງມີຄູຜູ້ນຶ່ງມາສອນຢູ່ເຮືອນເຈົ້າ ເຈົ້າກະຮຽນ
ບາດຮອດບ່າຍສອງຫາສາມໂມງ ເຈົ້າພັດຍ່າງອອກຫ້ອງເລີຍ ອະນິຈາ
ເປັນຫຍັງເຈົ້າຈຶ່ງບໍ່ຄິດອີດູກູນາຂ້ອຍແດ່ ຫາກຂ້ອຍບໍ່ຢາກສອນພາສາໃຫເຈົ້າ
ເຫດໃດລະຂ້ອຍຈຶ່ງແບກຫນ້າມາສອນນ້ອງຂ້ອຍກະໂຕເຮືອນເຈົາ ເຈົ້າຮູ້ບໍ່?
ກ່ອນຂ້ອຍຢາກມາສອນອັງກິດໃຫ້ເຈົ້າ ກໍດ້ວຍບ່າຍມື້ກ່ອນຫນ້ານັ້ນ
ຂ້ອຍເຫັນເຈົ້າໄປຮຽນອັງກິດແບບມີແຕ່ຫລັກໄວຍະກອນ (Grammar)
ນຳອ່າວປະສິດຢູ່ຫລັງອາຄານ ເບິ່ງແລ້ວຄືບໍ່ເປັນຕາໄດ້ເລື້ອງ ແນວເຈົ້າຫາກໍເລີ້ມຮຽນອັງກິດໃຫມ່
ເຫດໃດພັດມາຮຽນໄວຍະກອນແນວຍາກໆ ແລະບໍ່ຄ່ອຍໄດ້ໃຊ້ເລີຍ
ຂ້ອຍກະເລີຍວ່າຊິມາສອນອັງກິດ ແຕ່ເຈົ້າກໍບໍ່ຍອມຮຽນນຳຢູ່ດີໃນຂັ້ນທຳອິດ
ຈົນມາຮອດເກືອບທິດນຶ່ງຫລັງຈາກນັ້ນ ເຈົ້າຈຶ່ງຍອມຮຽນນຳ

ຕອນນັ້ນຂ້ອຍດີໃຈຈົນເນື້ອເຕັ້ນ ຈື່ບໍ່? ຂ້ອຍສອນເຈົ້າສອນເອົາສອນເອົາຢ່າງບໍ່ຮູ້ອິດເມື່ອຍເລີຍ
ບໍ່ພໍຕາມທຳມະດາຂ້ອຍສອນພຽງແຕ່ຊົ່ວໂມງດຽວຄືສອງໂມງຫາສາມໂມງ

ແຕ່ເມື່ອເຫັນເຈົ້າຢາກຮຽນແທ້ ຂ້ອຍກະເລີຍສອນໃຫ້ເຈົ້າຜູ້ດຽວເປັນພິເສດອີກແຕ່ສີ່ຫາຫ້າໂມງ
ຊົ່ວໂມງສອງໂມງຫາສາມໂມງເລື່ອນມາເປັນສາມໂມງຫາສີ່ໂມງ ຂ້ອຍຈື່ໄດ້ວ່າ
ຂ້ອຍສອນຫລາຍໆມື້ນັ້ນ ບໍ່ຈັກຈົດຄຳໃດໃຫ້ຈົບວ່າເລີກຫ້າໂມງ ກໍບໍ່ເປັນຫ້າໂມງເລີຍ
ແລະມື້ຕໍ່ໆໄປກໍຄືກັນ ກ່ວາຈະເລີກກໍເກືອບຫົກໂມງຍັງ
ແຕ່ປານນັ້ນຂ້ອຍກໍຍັງບໍ່ຢາກເລີກສອນງ່າຍໆ ແນວສອນຜູ້ທີ່ຂ້ອຍຮັກເດ ໃຜຊິຢາກເລີກໄວ
ແມ່ນບໍ່?

ເຈົ້າຈື່ບໍ່? ກ່ວາໆຂ້ອຍຊິກ້າວຂາອອກຈາກເຮືອນຂອງເຈົ້າກໍເກືອບຫົກໂມງພຸ້ນ
ບາງມື້ຈົນຮອດຫົກໂມງປາຍກໍມີ ຍັງໄດແຕ່ຕອນນັ້ນມັນນານຄ່ຳ ຄັນບໍ່ຊັ້ນ
ຍ້ານພໍ່ແມ່ບອກກິນເຂົ້ານຳ ກໍບໍ່ຮູ້ ເວົ້າແລ້ວເຮືອນເຈົ້າກິນເຂົ້າຄ່ຳໆ
ບາງມື້ຮອດເຈັດໂມງຫລືເຈັດໂມງປາຍກໍມີ ສຳລັບຂ້ອຍ
ພໍແຕ່ໄດ້ຍິນຂ່າວສຽງອະເມຣິກາພາກພາສາລາວເວລາເຈັດໂມງແລງໄດ້ເຄິ່ງນຶ່ງ
ຂ້ອຍກໍກຽມຕົວມາເຮືອນເຈົ້າໂລດ ຖ້າຄືນໃດຮອດເວລານັ້ນແລ້ວ ຍັງກິນເຂົ້າຢູ່
ຂ້ອຍກໍຟ້າວກິນໄວໆ ຈຣອດກໍບໍ່ປານ ຖ້າຄືນໃດຮອດເວລານັ້ນແລ້ວ ຍັງບໍ່ທັນໄດ້ກິນເຂົ້າ
ເພາະແຕ່ງກິນບໍ່ແລ້ວ ຂ້ອຍກໍບໍ່ຫິວຊາມັນຊ້ຳເຂົ້າແລງຄືນນັ້ນ ແລະຖ້າຄືນໃດ ກິນເຂົ້າແລ້ວ
ຍັງບໍ່ທັນຮອດເວລານັ້ນ ຂ້ອຍກໍໄດ້ແຕ່ນັບເວລາໃຫ້ມັນຮອດໄວໆ
ຄວາມຮັກມັກຫາກເປັນແນວນີ້ແຫລະ ຢາກເຫັນແຕ່ຫນ້າ ຖ້າບໍ່ເຫັນແທ້ໆ ເຫັນຊາຍຄາກໍພໍຢູ່
ດັ່ງນັ້ນຄືນໃດຖ້າຂ້ອຍບໍ່ໄດ້ມາຫລີ້ນເຮືອນເຈົ້າ ເພາະບໍ່ທັນຮອດມື້ເທື່ອ (ມາເທື່ອນຶ່ງບາສອງມື້)
ຂ້ອຍກໍມັກຍ່າງກາຍອາຄານເຈົ້າ ຫລືບໍ່ກໍຫລຽວເບິ່ງ ພຽງເທົ່ານັ້ນຂ້ອຍກໍຊື່ນໃຈ
ນອນຫລັບຝັນດີໄດ້ແລ້ວ ໂອຄວາມຮັກມັນຫາກມີຄວາມສຸກແນວນີ້ແຫລະ

ເກືອບລືມ ຍ້ອນວ່າເຈົ້າເລີ້ມເຫັນໃນຄວາມຮັກອັນບໍ່ມີທີ່ປຽບປານຂອງຂ້ອຍ
ຄຳເວົ້າທີ່ເຈົ້າມັກຢອກຍໍ້ຂ້ອຍວ່າ ຂ້ອຍເປັນຄົນເລ່ຫລ່ຽມ
ຈົນຂ້ອຍຕ້ອງຂຽນບົດລຳພຶງລຳພັນອອກມາ
ກໍຄ່ອຍໆມະລາຍຫາຍໄປຈາກຣິມສົບຂອງເຈົ້າໃນທີ່ສຸດ
ເພື່ອເປັນການລະລຶກເຖິງຄຳເວົ້າທີ່ຮີດຂອງເຈົ້າຕໍ່ຂ້ອຍ
ຂ້ອຍຂໍເອົາບົດລຳພຶງລຳພັນມາລົງໃຫ້ເຈົ້າໄດ້ອ່ານອີກເທື່ອນຶ່ງ ອ່ານແລ້ວກະຮູ້ເສັຽວ່າ
ເຈົ້ານີ້ກໍບໍ່ແມ່ນຂອງຄ່ອຍເລີຍ ແມ່ຍອດຫມາກກະດອງໃຈຂອງຂ້ອຍເອີຍ

# ເລ່ຫລ່ຽມ

ນາງນັ່ງຢູ່ຫັ້ນ ຍີ້ມແລະຫົວ
ທຸກອາຣິຍະບົດຂອງນາງ ສາຍຕາຂ້ອຍບັນຈົງບັນທຶກພາບເອົາໄວ້ ງາມ ຄົມ ຊຶ້ງ ຈະຫາພາບໃດໃນໂລກນີ້ ມາປຽບປານບໍ່ມີອີກແລ້ວ

ບາງຄັ້ງສາຍຕາເຮົາເຈິະກັນ ໃຈຂ້ອຍຮູ້ສຶກເຕັ້ນຕູມຕ່າມ ວາບຫລົ່ນໄປຈົນສຸດບຶ້ງຫົວໃຈ
ເປັນຫຍັງຈຶ່ງເປັນແນວນີ້ ຂ້ອຍເອງກໍບອກບໍ່ຖືກ ຄ້າຍໆກັບໃນຕາຂອງນາງມີແສງເຫລື້ອມ
ແວວວາວ ສາມາດແທງຊອດໃນຕາຂອງຂ້ອຍລົງເລິກໄປເຖິງຂົ້ວຫົວໃຈໄດ້

"ແນັດ ຂ້ອຍມັກໆເບິ່ງຕາຂອງເຈົ້າ ມັນງາມໆ"
ຂ້ອຍເອີ່ຍອອກມາເປັນຄັ້ງທີເທົ່າໃດກໍບໍ່ຮູ້ ບາງທີອາດຈະເປັນເທື່ອທີຮ້ອຍ ແລະບາງທີນາງອາດ
ຈະເບື່ອ ແລະວ່າຕັ້ງແກ້ງຍໍກໍເປັນໄດ້ ແຕ່ຫາກວ່ານີ້ເປັນການຍໍ ກໍເປັນການຍໍຈາກໃຈຈິງ
ຈາກຄວາມບໍຣິສຸດທີ່ໃນຕາແລະຫົວໃຈຊື່ໆບອກໃຫ້

"ເລ່ຫລ່ຽມ"
ນາງເອີ່ຍເບົາໆ ແລ້ວກໍຍີ້ມພ້ອມທັງອ່ຽງຫນ້າຫນີ ຫົວໃຈຂ້ອຍວາບຫລົ່ນອີກຄັ້ງ ເມື່ອເຫັນຮອຍຍີ້ມ
ທີ່ຕຶ້ງຕາຕຶ້ງໃຈນີ້ ຫາກເປັນໄປໄດ້ຂ້ອຍຢາກຈະເກັບຮອຍຍີ້ມນາງ
ໄວ້ເປັນສົມບັດຂອງຂ້ອຍພຽງຜູ້ດຽວ ບໍ່ຢາກໃຫ້ໃຜອື່ນໃດມາເຫັນແລະມາຍາດເອົາໄປຄອງເລີຍ

"ແນັດ ຂ້ອຍມັກໆຟັງສຽງຂອງເຈົ້າ ຖ້າມື້ໃດຂ້ອຍໄດ້ຍິນສຽງຂອງເຈົ້າ ມື້ນັ້ນບໍ່ໃຫ້ຂ້ອຍກິນເຂົ້າ ກໍຍັງໄດ້"
ຂ້ອຍເວົ້າບໍ່ທັນເທົ່າໃດ ຄໍາເວົ້າທີ່ຮິດທີ່ສຸດຂອງເຈົ້າກໍດັງຂຶ້ນເປັນຄັ້ງທີ... ຂ້ອຍເອງກໍນັບບໍ່ໄດ້
"ເລ່ຫລ່ຽມ"

ຂ້ອຍຍີ້ມແຫ້ງໆ ຄໍາເວົ້າທີ່ກັ່ນອອກມາຈາກສ່ວນເລິກຂອງຫົວໃຈກາຍເປັນຄໍາວ່າ"ເລ່ຫລ່ຽມ"ໄປໄດ້
ຖ້ານາງຫາກແນມເບິ່ງດວງຕາຂ້ອຍ ຫລຽວເຫັນດວງໃຈຂ້ອຍ ນາງຄົງຈະຮູ້ ນາງຄົງຈະເຂົ້າໃຈ
ທຸກຄໍາເວົ້າຂອງຜູ້ທີ່ເຫີດທູນແລະຢືນຢັດຕໍ່ສູ້ເພື່ອອຸດົມການ ອັດແຫນ້ນໄປດ້ວຍສັດຈະພຽງໃດ
ແຕ່ກໍຢ່າງວ່າລະ ຄວາມຈິງໃຈຫລືຈະໄປສູ້ຄໍາປີ້ນປອກ ຂ້ອຍຮູ້ ຄວາມປີ້ນປອກອາດຈະເປັນ
ປໂຍດແກ່ຂ້ອຍ ແຕ່ຄຸນນະທັມປະຈໍາໃຈ ບໍ່ອະນຸຍາດໃຫ້ຂ້ອຍເວົ້າມັນອອກມາໃຫ້ເປັນມົນທິນໄດ້
ຂ້ອຍຈົນ ຂ້ອຍຂີ້ຮ້າຍທ້າຍເປກໍຈິງ ແຕ່ຄວາມຈົນຄວາມຂີ້ລ້າຍ ບໍ່ແມ່ນວ່າຊິສາມາດຜັກດັນ
ໃຫ້ຂ້ອຍກາຍເປັນຄົນຊົ່ວໄດ້ ຜ່ານມາ ຂ້ອຍອາດຈະເວົ້າຈາຄຶກຄະນອງ ຍີ້ມຫົວບໍ່ອັ້ນ ແຕ່ໃຜແດ່ນໍ
ຈະຮູ້ວ່າ ຫົວໃຈຂ້ອຍມັນສະເທືອນໄດ້ງ່າຍພຽງໃດ

ຂ້ອຍຢາກຈະງຽບຈະເສົ້າແລະຢາກຈະຮ້ອງໄຫ້ດັງໆ ເພື່ອໃຫ້ນາງໄດ້ຍິນແຕ່ກໍຕ້ອງຍີ້ມ
ແລະຫົວແທນເພື່ອຮັບເອົາຄໍາວ່າ"ເລ່ຫລ່ຽມ"ຂອງນາງຕໍ່ໄປ

ນາງຍັງຄົງນັ່ງຢູ່ຫັ້ນ ໃຕ້ແສງຕະກຽງສີມົວໆ ຍີ້ມ... ຫົວ...
ທຸກອະຣິຍະບົດຂອງນາງ ສາຍຕາຂ້ອຍກໍຍັງຄົງບັນຈົງບັນທຶກພາບເອົາໄວ້ຢູ່ຕລອດໄປ

## ຕອນທີ໑໓ ຫມາກມ່ວງຫມາກນັດ ໂອຍຈັ່ງມີແຕ່ແນວແຊບໆ

ເຈົ້າຈື່ບໍ່? ມາລະຍະນຶ່ງຫມາກມ່ວງຫມາກນັດຢູ່ນາໂພຫລາຍໆ
ຕອນນັ້ນເຮົາສອງເຄີຍນັ່ງກິນແຈ່ວຫມາກມ່ວງນຳກັນ ລົດຊາດບໍ່ຕ້ອງຫ່ວງ
ສົ້ມປ້ຽວຈົນຮີມຕາສັ່ນຍິກໆ ແຕ່ປານນັ້ນກໍຍັງບໍ່ມີໃຜຍອມເຊົາ ກິນເອົາກິນເອົາ
ຄືປານບໍ່ຢ້ານທ້ອງນ້ຳຊິຖາມຫາ ສຳລັບຂ້ອຍ ບໍ່ຕ້ອງຫ່ວງ ກິນເທື່ອໃດ ຈ່ອກເທື່ອນັ້ນ
ແນວວ່າທ້ອງຂ້ອຍມັນຊຸບເປີ້ບໍ່ໄດ້ເລື້ອງ ແຕ່ສຳລັບເຈົ້າ ບໍ່ຈັກແຫລ້ວ ຄົນລະຍິ່ທໍ້ຕີ໋ ຄືໆໄດ້ຍິນວ່າ
ສອງສາມມື້ຈື່ໄປຢາມທ້ອງນ້ຳເທື່ອນຶ່ງ ເວົ້າແລ້ວ ນ້ຳແຈ່ວຫມາກມ່ວງເຈົ້ານີ່ມຂນາດ
ຫລີ້ນເອົາຂ້ອຍເລັ່ງສິບເລັ່ງປາກ ປານນັ້ນກໍຍັງບໍ່ຫນ່ຳໃຈ ຍັງຮອດເລັ່ງນີ້ວມືທັງຫ້ານີ້ວເລີຍ
ນີ້ສົມມຸດຖ້າຂ້ອຍໃຊ້ມືຊ້າຍຈ້ຳແຈ່ວຫມາກມ່ວງອີກ ມີຫວັງຂ້ອຍຄົງໄດ້ເລັ່ງທັງສິບນີ້ວແນ່ນອນ

ວົກມາເວົ້າເລື້ອງຫມາກນັດ ຕອນນັ້ນຫມາກນັດລາຄາຖືກໆ
ຫນ່ວຍບັ໋ກໃຫຍ່ໆລາຄາພຽງຫ້າຫົກບາດ ເປັນອັນວ່າ ລະຍະນັ້ນລາບປາກແທ້ໆ
ຫມາກນັດກະຫວານ ຫມາກມ່ວງກະສົ້າ ມະຫາສົ້ມ ໄຄແຕ່ຫນ່ວຍເທີ່ມທໍ່ນັ້ນ ຄ່ອຍຫວານແດ່
ແຕ່ເຖິງຊິສົ້ມຊິຫວານ ມາຖືກແຈ່ວມະຫາສເນີເຈົ້າແລ້ວ ລົງຄໍໄດ້ຫມົດ
ລະຍະຕໍ່ມາຫມາກມ່ວງເລີ້ມສຸກ ທຳອິດກະອ່າວແພງແດ່ ຫນ່ວຍລະສາມສີ່ບາດ
ບໍ່ດົນກະຫລຸດລົງມາຫນ່ວຍລະສອງສາມບາດ ບາດມັນມີຫລາຍແທ້ໆ
ກະເລີຍກາຍເປັນຫນ່ວຍລະບາດ ສົມໃຈຜູ້ຢາກກິນຫມາກມ່ວງໃຫ້ຊ່ຳປາກໄປເລີຍ
ຕອນນັນອີກຄືກັນ ຂ້ອຍມັກມີລາຍການຢູ່ເຮືອນເຈົ້າ ລາຍການນັ້ນກໍບໍ່ມີຫຍັງຫລາຍດອກ
ພຽງແຕ່ເຮັດເຂົ້າປຸ້ນກິນ ແລ້ວເປີດເທັບຟັງເພງໃຫ້ສະເບີຍອາລົມ ຂ້ອຍເຮັດເຂົ້າປຸ້ນຢູ່ເຮືອນເຈົ້າ
ຊົງຊິແມ່ນສອງເທື່ອ ເທື່ອນຶ່ງໃຫ້ເຈົ້າເຮັດ ແລະເທື່ອຕໍ່ມາໃຫ້ຫວັນເຮັດ ແຕ່ເວົ້າໄປເວົ້າມາແລ້ວ
ເທື່ອໃຫ້ເຈົ້າເຮັດແຊບກ່ອນໃດ໋ ຢາກຮູ້ບໍ່ລະດ້ວຍເຫດໃດກັນແທ້?
ກໍເພາະເທື່ອເຈົ້າເຮັດຂ້ອຍກິນຄຳໃດ ຄືຈັ່ງວ່າແຊບເຂົ້າໄປເຖິງຂົ້ວຫົວໃຈ
ແມ້ນກະທັ່ງນ້ຳຮ້ອນໆມັນລວກລີ້ນ ຂ້ອຍກໍຍັງບໍ່ຍອມຄາຍ ກືນລົງຄໍເລີຍພຸ້ນນະ

ມີມື້ນຶ່ງເຈົ້າຊວນຂ້ອຍກິນລາບປານຳ ຂ້ອຍກະກ້າແດ່ ບໍ່ກ້າແດ່ ແນວກິນນຳຄອບຄົວເຈົ້າ
ຂ້ອຍແຮ່ງອາຍ ແຕ່ມື້ນັ້ນ ຈັກຄິດແນວໃດຂ້ອຍຈຶ່ງເລີຍຕົກລົງຢູ່ກິນນຳ ອາດຈະເປັນຍ້ອນ
ຢາກຈະເຫັນຫນ້າເຈົ້າແມ້ນພຽງອີກຈັກຊົ່ວໂມງສອງຊົ່ວໂມງກໍບໍ່ຮູ້? ເຈົ້າເຫັນບໍ່? ຕອນຂ້ອຍກິນ

ຂ້ອຍກິນສຸດມະຫາຊ້າ ຈົ້ຳແຕ່ລະຄຳ ຄືຈັ່ງວ່າມັນຫນັກໆແລະຢູ່ໄກໆຂ້ອຍ
ທັງທີ່ມັນກະຢູ່ໃກ້ໆຂ້ອຍນີ້ເອງ ເວົ້າເລື້ອງອາຫານການກິນບໍ່ຕ້ອງຫ່ວງ ເຈົ້າເຮັດແຊບໆຫອມໆ
ຈົນນ້ຳລາຍຂ້ອຍຊິໄຫລອອກມາໃຫ້ໄດ້ ນີ້ຖ້າບໍ່ແມ່ນເຮືອນເຈົ້າ ມີຫວັງຂ້ອຍໃສ່ເກັ່ງຫມາ
ມ່ຳແບບຫມູເລີຍ ຊິງຊິແມ່ນມື້ນັ້ນບໍ່? ຫລືມື້ໃດກໍບໍ່ຮູ້? ຫລັງຈາກກິນແລ້ວໆ
ພວກເຮົາລ້າງຖ້ວຍນຳກັນ ມີຊຸນກັນຂ້ອຍປານວ່າຂຶ້ນສວັນຊັ້ນຟ້າດາວະດຶງພຸ້ນນະ
ມື້ນັ້ນຈັກເອື້ອຍໄລເມັງອ້າຍສອນມາແຕ່ທິບໃດ ເຫັນພວກເຮົາພວມລ້າງຖ້ວຍນຳກັນ ທັງຢອກກັນ
ເລີຍດອດຂຶ້ນວ່າ "ພວກເຈົ້າສອງຄົນຢອກກັນແບບນີ້ ບາດໄດ້ກັນແທ້ ຈັກຊິວ່າແນວໃດ?" ຮ່ອຍ
ໄດ້ກັນແທ້ກະດີຕິ໋ວ ແນວຮັກກັນກໍຍ່ອມໄດ້ກັນ ຖ້າບໍ່ຮັກກັນ ເຫດໃດຊິໄດ້ກັນ ແມ່ນບໍ່ແມັດ?
ລາວເວົ້າແນວນີ້ ຟັງໄປຟັງມາ ຄືລາວຊິບໍ່ເຊື່ອວ່າ ເຮົາສອງຄົນຊິຮັກກັນແທ້ ບໍ່ເປັນຫຍັງ
ຜູ້ອື່ນເຊື່ອບໍ່ເຊື່ອບໍ່ສຳຄັນ ຂໍພຽງເຈົ້າເຊື່ອຂ້ອຍ ຂ້ອຍເຊື່ອເຈົ້າເທົ່ານັ້ນ
ຄວາມຮັກຂອງເຮົາສອງກໍສົມຫວັງແລ້ວ ຂ້ອຍເວົ້າຖືກບໍ່? ແມັດທີ່ຮັກ

ອີກເຊັ່ນເຄີຍ ຄວາມເປັນນັກກະວີບ້າໆບ໋ອງໆຂອງຂ້ອຍ
ກໍເລີຍບັນດານໃຫ້ຂ້ອຍຂຽນຂໍ້ຄວາມຂ້າງລຸ່ມເພື່ອເຈົ້າເພື່ອຂ້ອຍເພື່ອຄວາມຮັກຂອງເຮົາທັງສອງ

## ເຈົ້າແລະຂ້ອຍ

ທີ່ຮັກ...

ເມື່ອຄົນອື່ນຮັກແລະຄິດເຖິງເຈົ້າ

ເຂົາຮັກແລະຄິດເຖິງຄວາມງາມທີ່ເຈົ້າມີ

ຄວາມຫວານຫວານທີ່ເຂົາຈະໄດ້ຮັບ

ຫລືບໍ່? ກໍຜົນປໂຍດທີ່ເຂົາຈະໄດ້ຮັບຈາກເຈົ້າ

ຍອດດວງໃຈ...

ເມື່ອຂ້ອຍຮັກແລະຄິດເຖິງເຈົ້າ

ຂ້ອຍຮັກແລະຄິດເຖິງຄວາມດີທີ່ເຈົ້າມີ

ຄວາມເຫັນໃຈທີ່ເຈົ້າມອບໃຫ້

ຫລືບໍ່? ກໍສິ່ງໃດແດ່ທີ່ຂ້ອຍຈະມອບໃຫ້ເຈົ້າ

ສຸດປາຖນາ...

ເມື່ອຄົນອື່ນຮັກແລະຄິດເຖິງຂ້ອຍ

ເຂົາຮັກແລະຄິດເຖິງຜົນປໂຍດທີ່ຂ້ອຍມີ

ຄວາມສຸກສະບາຍທີ່ເຂົາຈະໄດ້ຮັບ

ຫລືບໍ່? ກໍຄວາມເຊື່ເຊີ່ທີ່ເຂົາຈະຕົວະຕົ້ມຈາກຂ້ອຍ

ຍອດບູຊາ...

ເມື່ອເຈົ້າຮັກແລະຄິດເຖິງຂ້ອຍ

ເຈົ້າຮັກແລະຄິດເຖິງຄວາມຮັກແທ້ທີ່ຂ້ອຍມີ

ຄວາມເຂົ້າໃຈທີ່ຂ້ອຍມອບໃຫ້

ຫລືບໍ່? ກໍສິ່ງໃດແດ່ທີ່ເຈົ້າຄວນຈະມອບໃຫ້ຂ້ອຍ

ສຸດທີ່ຮັກ...

ຢູ່ໃນໂລກນີ້ ບໍ່ມີໃຜຮູ້ເກີນກ່ວາພວກເຮົາດອກວ່າ

ເຈົ້າແລະຂ້ອຍມີຄວາມໝາຍຕໍ່ກັນຂນາດໃດ?

ຄົນອື່ນອາກຈະຮູ້ພຽງວ່າ ເຈົ້າແລະຂ້ອຍຮັກກັນຫລາຍໃນວັນນີ້

ແຕ່ວັນໜ້າ ທຸກສິ່ງອາດຈະປ່ຽນໄປ

ບົດເພງເກົ່າໆທີ່ບັນເລງດ້ວຍຄວາມເສົ້າ

ອາດຈະຖືກບັນເລງເມື່ອຝ່າຍໃດຝ່າຍນຶ່ງຫ່າງລາ

ຍອດຊີວີ...

ເຖິງຄົນອື່ນຈະເຂົ້າໃຈໄປຕ່າງໆນາໆ

ເຈົ້າກໍຍັງຄືເຈົ້າ ແລະຂ້ອຍກໍຍັງຄືຂ້ອຍ

ໃນໂລກຂອງຂ້ອຍມີພຽງເຈົ້າ ແລະໃນໂລກຂອງເຈົ້າມີພຽງຂ້ອຍ

ບົດເພງຂອງພວກເຮົາ ຈະບໍ່ມີວັນລົງທ້າຍດ້ວຍຄວາມເສົ້າ

ແລະຝ່າຍໃດຝ່າຍນຶ່ງ ຈະບໍ່ມີວັນຫ່າງລາ

ຫາກເຖິງຄາວຈຳເປັນ

ຂ້ອຍຈະເປັນ Romeo ແລະເຈົ້າຈະເປັນ Juliet

ແລະໂລກນີ້ຈະເປັນຂອງເຮົາຊົ່ວນິດນິຣັນ:

ເຈົ້າແລະຂ້ອຍ

## ຕອນທີ໑໔ ປີໃຫມ່ລາວ ຂໍຫົດນ້ຳຈັກບາດ

ພໍເມື່ອກາລເວລາຜ່ານພົ້ນໄປອີກບໍ່ດົນ ປີໃຫມ່ລາວກໍມາເຖິງ
ແລະພ້ອມກັບການມາເຖິງຂອງປີໃຫມ່ລາວໃນວັນທີ໑໓ເດືອນເມສານີ້
ຂ້ອຍກັບທ້າວແບ້ກຊໍຖືຄຸນ້ຳທີ່ມີນ້ຳຫອມລາຄາຖືກໆໂຮຍລົງ ມາລໍຖ້າຫົດເຈົ້າ
ເອົາແຕ່ຕາເວັນບໍ່ທັນຂຶ້ນສູ່ທ້ອງຟ້າເລີຍ ເຊົ້ານັ້ນເຈົ້າບໍ່ທັນລຸກຈາກບ່ອນເທື່ອ (ເອັວ! ເອັວ!)
ຜູ້ສາວພິສັງຄືມານອນຕື່ນສ່ວາຍແທ້ ເຫັນແຕ່ແມ່ທີ່ພວມອາບນ້ຳຢູ່ເຮືອນຄົວ
ຂ້ອຍກະຂໍຫົດເພິ່ນກ່ອນ ຕໍ່ມາກະພໍ່ແລະຫວັນ ພໍເມື່ອເຈົ້າອອກມາ
ບໍ່ຄິດວ່າຂ້ອຍຈະມາຫົດແຕ່ເຊົ້າແຕ່ຊຽວ ເຫັນຄຸນ້ຳຂ້ອຍ ເຈົ້າກະເກືອຍປິບເຂົ້າຄືນ
ດີແຕ່ເຈົ້າເຂົ້າມາຢູ່ໃນເຮືອນຄົວກ່ອນ ແລະຂ້ອຍກະຕັ້ນທາງອອກໄວ້ ເຈົ້າກະເລີຍຫມົດທາງຫນີ
ແຕ່ກະຈັກຊິຫນີເຮັດຫຍັງ? ແນວຮັກກະຈັ່ງມາຫົດນໍ ຮູ້ບໍ່ວ່າ?

ນ້ຳແຕ່ລະຢົດ ທີ່ລົນຫລັ່ງລົງນາງ

ນັ້ນຄືໃຈຂອງຊາຍ ໄມຕີມານ້ອມ

ບໍ່ແມ່ນຫວັງທຳເຈົ້າ ອາພອນໃຫ້ປຽກຊຸ່ມ

ຫາກວ່າເປັນອື່ນແລ້ວ ຊາຍນີ້ທ່ອນທຳ ວ່າຫນາ

ເປັນອັນວ່າມື້ນັ້ນ ຂ້ອຍຫົດເຈົ້າ ເຈົ້າຫົດຂ້ອຍ ຫມົດນ້ຳເຈົ້າເປັນຕັ້ງຫລາຍຄຸ
ເບິ່ງພວກເຮົາພາກັນຫນາວສັ່ນ ປານໄກ່ນ້ອຍຕົກນ້ຳກະບໍ່ປານ ບາດວ່າບໍ່ມີນ້ຳຊິໃຫ້ຫົດອີກແລ້ວ
ພວກຂ້ອຍຈຶ່ງຄ່ອຍຍົກທັບກັບເມືອ ພ້ອມກັບເສື້ອຜ້າທີ່ປຽກຊຸ່ມດ້ວຍນ້ຳ ຫລີ້ນເອົາຜູ້ທີ່ມາພົບເຫັນ
ຫລຽວເບິ່ງນຳເປັນແຖວ ແນວເອົາກັນແຕ່ຫົກໂມງເຊົ້າ ຕ່າງຫມູ່ຂນາດ ເຈົ້າຈື່ບໍ່?
ອີກສອງຊົ່ວໂມງມາ ຂ້ອຍກະເວີ່ນມາຫາເຈົ້າອີກ ທຳອິດກະວ່າຊິສອນອັງກິດເຈົ້າຕໍ່
ແນວຕົກລົງກັນວ່າຊິຮຽນ ເຖິງຊິແມ່ນບຸນຫົດນ້ຳກໍຕາມ ແຕ່ເອົາໄປເອົາມາ ເຈົ້າກັບປ່ຽນໃຈ
ບໍ່ຮຽນຊ້ຳ ບໍ່ພໍບາດຂ້ອຍຊວນໄປສົງພະນຳຢູ່ວັດ ກະວ່າບໍ່ໄປ ຂ້ອຍແລ້ວຫມົດແນວຊິເວົ້າຊິຊວນ
ຕື້ກະແລ້ວ ຊູຊີກະແລ້ວ ຈົນຂ້ອຍຕ້ອງເວົ້າອອກໄປຢ່າງນ້ອຍເນື້ອຕ່ຳໃຈວ່າ ຖ້າເຈົ້າບໍ່ໄປສົງພະນຳ
ຂ້ອຍຊິບໍ່ຫລີ້ນມັນດອກ ບຸນຫົດນ້ຳປີນີ້ ແລະຂ້ອຍກະເຮັດຕາມຄຳເວົ້າອີ່ຫລີ

ປີໃຫມ່ປີນັ້ນຂ້ອຍນອນຢູ່ເຮືອນຫມົດທັງສາມມື້ ບໍ່ໄດ້ອອກໄປຫົດໃຜເລີຍ
ມີແຕ່ແມ່ພັດຂ້າງບ້ານດຶງຂ້ອຍອອກມາຫົດຜູ້ດຽວ ນອກນັ້ນປານວ່າບໍ່ແມ່ນບຸນຫົດນ້ຳເລີຍ
ອະນິຈັງອະນິຈາເອີຍ ບຸນຫົດນ້ຳທັງເທື່ອກະບໍ່ມ່ວນນຳເຂົາເລີຍ
ແຖມອຸກອັ່ງບໍ່ເຂົ້າໃຈຕົນເອງອີກດ້ວຍ ສິ່ງທີ່ຂ້ອຍເສັ່ງດາຍທີ່ສຸດຄືຕລອດເວລາປີໃຫມ່ນັ້ນ
ຂ້ອຍຢາກພົບຢາກລົມເຈົ້າຊິຕາຍ ແຕ່ກໍບໍ່ຍອມມາຫາດ້ວຍກຽດ ກຽດຕົວດຽວແທ້ໆ

ຈົນຮອດຄ່ຳວັນທີ໑໖ ຫມົດບຸນຫົວນ້ຳແລ້ວ ຂ້ອຍຈຶ່ງຄ່ອຍມາຫາເຈົ້າອີກ ຂ້ອຍນັ່ງຖ້າເຈົ້າດົນເຕີບ
ເຈົ້າຈຶ່ງຄ່ອຍກັບມາແຕ່ສູ່ຂວັນຂອງອາຄານ ບໍ່ຕ້ອງບອກກະໄດ້ຕິວ່າ
ໃບຫນ້າຂອ້ຍຫມອງເສົ້າຂນາດໃດ
ເມື່ອຄິດເຖິງວ່າຕລອດລະຍະເວລາທີ່ຂ້ອຍຫມອງຫມົ່ນຄິດເຖິງເຈົ້າຢູ່ນັ້ນ
ເຈົ້າພັດຍິ້ມຊື່ນບໍ່ໄດ້ຄິດເຖິງຂ້ອຍແມ່ນແຕ່ພຽງຫນ້ອຍດຽວເລີຍ
ສິ່ງນີ້ຕ່ຳຫົວໃຈຂ້ອຍດັ່ງຄື້ນມະຫາມາທີ່ໂຫມກະທົບຝັ່ງ
ມັນແສນເຈັບປວດແລະຮວດຮ້າວເຫລືອທີ່ຈະທົນ ມີພຽງໃບຫນ້າທີ່ກົ້ມແລະກົ້ມເທົ່ານັ້ນ
ຈະຊ່ອຍປິດບັງຄວາມລະທົມຂອງຂ້ອຍບໍ່ໃຫ້ເຈົ້າເຫັນໄດ້ ຕອນນັ້ນຂ້ອຍຄິດວ່າ
ໂລກນີ້ຄືຈະມີແຕ່ມືດມິດສຳລັບຂ້ອຍ ຈົນກະທັ່ງເຈົ້າດຶງຝ້າຍຜູກແຂນທີ່ມັດຢູ່ແຂນເຈົ້າ
ອອກມາຜູກໃຫ້ຂ້ອຍ ແລະເອີ່ຍຂຶ້ນດ້ວຍນ້ຳສຽງທີ່ຫວານຊ່ຳວ່າ "ຕໍ່ໄປນີ້
ຂ້ອຍຂໍໃຫ້ເຈົ້າຈົ່ງມີແຕ່ຄວາມສຸກ ຢ່າໄດ້ມີຫມອງເສົ້າອີກຕໍ່ໄປເລີຍ" ພຽງເທົ່ານັ້ນ
ນ້ຳຕາຂ້ອຍກໍໄຫລຜ່າເບົ້າ ໂອ້ແນັດ ຢ່າງຫນ້ອຍເຈົ້າກໍຍັງຮັກຄິດເຖິງແລະເປັນຫ່ວງຂ້ອຍສເມີມາ
ແລ້ວຂ້ອຍເດ ເປັນຫຍັງຂ້ອຍຈຶ່ງບໍ່ມັກເຂົ້າໃຈເຈົ້າ ນີ້ແມ້ນພຽງຂ້ອຍເຂົາໃຈເຈົ້າຫລາຍກ່ວານີ້
ຮູ້ວ່າເຈົ້າອາຍຈຶ່ງບໍ່ຍອມໄປສົງພະຢູ່ວັດນຳຂ້ອຍ
ປີໃຫມ່ລາວປີ໗໔ຄົງຈະມີຄວາມຫມາຍດື່ມດ່ຳຫົວໃຈເຮົາສອງຫລາຍກ່ວານີ້ ແມ່ນບໍ່ແນັດ?



Postcard
ປີໃຫມ່ທີ່ຂ້ອຍມອບໃຫ້ເຈົ້າ
ຂ້າງຫລັງຊ່ອງທັ້ນຂຽນວ່າ
ແດ່ແນັດ
ເນື່ອງໃນໂອກາດປີໃຫມ່ລາວ
ພ.ສ.໒໕໒໕
ຂ້ອຍຂໍອວຍພອນໃຫ້ເຈົ້າ

ຜູ້ທີ່ຂ້ອຍຮັກສເມີດັ່ງອຸດົມການ ຈິ່ງມີແຕ່ຄວາມສຸກສົມຫວັງຕລອດໄປ
**ຂໍຟ້າຈົ່ງປານີຄຸ້ມຄອງຮັກເຮົາສອງໃຫ້ແຍ້ມບານຕລອດໄປ**

ລະຍະນຶ່ງມີການສະແດງສິລປະໃນລາຍການ ຄືນສູ່ຢ້າວ ຂ້ອຍຊວນເຈົ້າໄປເບິ່ງ
ແຕ່ເຈົ້າກະວ່າບໍ່ໄປ ຂ້ອຍກໍບໍ່ຮູ້ວ່າຫຍັງ ແຕ່ຮອດມື້ແລງມາ ຂ້ອຍມາຫລິ້ນນຳເຈົ້າ
ບໍ່ທັນທີ່ຈະເຂົ້າເຮືອນຊ້ຳ ເຈົ້າກະວ່າ ຂ້ອຍຊິໄປເບິ່ງຟ້ອນ ແມ່ກະໄປ ພວກນາງແຕ່ງມາເຊີນ
ຫມາຍຄວາມວ່າພວກເຈົ້າມີທີ່ນັ່ງພິເສດ ຕອນນັ້ນຫູຂ້ອຍອື້ໄປຫມົດ
ບໍ່ເຂົ້າໃຈວ່າເປັນຫຍັງເຫດການມັນຈຶ່ງກັບຈາກຫລັງມືເປັນຫນ້າມື ຄຳທີ່ເຈົ້າຊວນຂ້ອຍ
ຂ້ອຍໄດ້ຍິນເປັນລະລ່ຳລະລັກ ແລະກະປະໃຫ້ມັນຜ່ານຈາກຫູນຶ່ງໄປສູ່ຫູນຶ່ງ
ເມື່ອຂ້ອຍຍ່າງປິ່ນຫລັງກັບສູ່ອາຄານ ຄືນນັ້ນຂ້ອຍນອນດ້ວຍຫົວໃຈຫວາດຫວິວເປັນສັ່ນໆ
ບາງຄັ້ງເຖິງກັບນ້ຳຕາໄຫລຊຶ່ມ ເມື່ອຄິດເຖິງຄວາມຕ່ຳຕ້ອຍຂອງຕົນເອງທີ່ບໍ່ມີທີ່ນັ່ງພິເສດຄືເຂົາອື່ນ
ຂ້ອຍໄດ້ແຕ່ບອກຕົວເອງວ່າ ຂ້ອຍຊັງອະພິສິດໃນສັງຄົມຊຶ່ງເຮັດໃຫ້ຜູ້ທີ່ບໍ່ມີເຄ
ຈຳຕ້ອງກ່ຳກືນຫມອງຫມົ່ນ ແຕ່ຂ້ອຍກໍບໍ່ຊັງເຈົ້າດອກເພາະເຈົ້າບໍ່ໄດ້ຜິດຫຍັງ
ຍິງສາວທຸກຄົນຍ່ອມຕ້ອງການຄວາມສະດວກສະບາຍເປັນຂອງທຳມະດາ
ແຕ່ເຫດວ່າເປັນຫຍັງຂ້ອຍຈຶ່ງນ້ຳຕາໄຫລຊຶ່ມ ບາງທີວັນນຶ່ງເມື່ອເຈົ້າຮັກຂ້ອຍຊ່ຳຂ້ອຍຮັກເຈົ້າ
ເຈົ້າຈະເຂົ້າໃຈສິ່ງນີ້ໄດ້ເອງ

## ຕອນທີ໑໕ ໄຂປະຕູ ບັກລູກເຂີຍ

ມາຮອດລະຍະນຶ່ງ ແມ່ມັກເວົ້າຫລາຍແລະຮ້ອງເພງອີກ ທຳອິດຂ້ອຍກໍຄິດພຽງວ່າ
ເພິ່ນຄົງມັກມ່ວນຊື່ໆ ແນວເພິ່ນສຽງກໍດີ ຮ້ອງເພງກະເກ່ງ
ສ່ວນຫລາຍເພງເພິ່ນມັກຮ້ອງແມ່ນເພງຮັກສາວປາກເຊ ດ້ວຍວ່າກໍຄືຮູ້ໆ ພວກເຈົ້າແມ່ນໄທປາກເຊ
ຫລືຊິເວົ້າໃຫ້ຖືກເປາະກໍຄືໄທທ່າຫີນ ຟາກຂົວຫີນໄປ
ເພງທີ່ຖືກໃຈຕິດປາກກໍຕ້ອງແມ່ນຮັກສາວປາກເຊຫັ້ນແຫລ້ວ ບໍ່ພໍແມ່ຍັງຮູ້ຜຍາພາສິດໂຕ່ງໂຕຍ
ຈົນຂ້ອຍຊຶ່ງກໍໄດ້ຊື່ວ່ານັກຮຽນຮູ້ຜູ້ນຶ່ງ ກໍຕ້ອງອາຍເລີຍ ເວົ້າແລ້ວ
ບໍ່ໃຫ້ແມ່ເກ່ງກ່ວາຂ້ອຍຜູ້ມີປັນຍາຕື້ໄດ້ຈັ່ງໃດ ໃນເມື່ອຜູ້ເຖົ້າເຈົ້າເປັນຮອດຫົວຫນ້າສານ
ຄຳຫລັກຄຳດີແນວໃດກໍມີເຕັມປູ້ມໄວ້ຫມົດ
ເສັຽດາຍແຕ່ວ່າແມ່ບໍ່ໄດ້ມີໂອກາດຮຽນຕໍ່ຫລັງຈາກຊັ້ນປໍສາມ

ເພາະຕ້ອງຄາລ້ຽງນ້ອງທີ່ຄານຕາມກັນອອກມາຕັ້ງສິບກ່ວາຄົນພຸ້ນ
ບໍ່ຊັ້ນແມ່ກໍຄົງບໍ່ຕໍ່າຕ້ອຍກ່ວາອ້າຍຫລືນ້ອງໆເພິ່ນທີ່ເປັນຮອດຫົວຫນ້າທະນາຄານແຫ່ງຊາດ
ຜູ້ບັງຄັບຄ້າຍສາງກະສູນ ຫລືບໍ່ກໍທ່ານຫມໍດອກເຕີ້ທັງຫລາຍ?

ສິ່ງນຶ່ງທີ່ຂ້ອຍຫມັ້ນໃຈວ່າແມ່ມີສມອງຊັ້ນຢ້ຽມກໍຄື ເພິ່ນໄລ່ເງິນໄວກ່ວາແມ່ຄ້າຂາຍຂອງອີກ
ເຂົາເຈົ້າບໍ່ທັນຮອດຊິທອນຈັ່ງໃດ ເພິ່ນກໍບອກເຂົາໄດ້ກ່ອນໂລດ ບໍ່ພໍເລື້ອງຄວາມຈໍາບໍ່ຕ້ອງຫ່ວງ
ບໍ່ວ່າເພງລາວຫລືເພງໄທສໄມໃດ ເພິ່ນຮ້ອງໄດ້ຫມົດປານວ່າເພິ່ນເປັນຜູ້ແຕ່ງເຫລົ່ານັ້ນພຸ້ນ
ເສັຽດາຍນໍທີ່ລູກສາວບາດຊິຮ້ອງເພງ ກໍຮ້ອງແຕ່ຢູ່ຫ້ອງນໍ້າ ຢ້ານແຕ່ຜູ້ອື່ນຊິໄດ້ຍິນນໍານີ້ແຫລະ
ເວົ້າແລ້ວ ແມ່ກັບຂ້ອຍແມ່ນຖືກກັນບໍ່ເຖິງຂັ້ນເປັນປີ່ເປັນຂຸ່ຍ
ແຕ່ກະມະລ້ອງມະຕ່ອງກັນດີພໍສົມຄວນ ແນວວ່າຂ້ອຍບໍ່ມັກປາກ
ມີເຫດໃດລະຊິໄປຂັດກັບວ່າທີແມ່ເຖົ້າໄດ້ ແມ່ນບໍ່? ອີກຢ່າງ
ຜູ້ທີ່ມາແວະວຽນກັບສອງເອື້ອຍນ້ອງເຈົ້າ ກະມີແຕ່ຂ້ອຍທີ່ມີທ່າເອົາຈິງເອົາຈັງ
ບໍ່ສາມາລອກກອກເກເຣ່ຄືຄົນອື່ນໆ ແມ່ກໍເລີຍຮັກຂ້ອຍຄືກັບລູກຄີງໆຂອງເພິ່ນ
ປານນັ້ນຂ້ອຍກໍຍັງບໍ່ຮູ້ເລື້ອງລັບລົມຄາຍໃນຄອບຄົວເຈົ້າປານໃດ
ດັ່ງນັ້ນເຫດການໃຫມ່ໆນີ້ຈຶ່ງເຮັດໃຫ້ຂ້ອຍງົງປານໄກ່ຕາແຕກພຸ້ນເລີຍ




ພໍ່ສີທັນແລະແມ່ບຸນລ້ອນ
ຫ້ອມລ້ອມໄປດ້ວຍລູກໆ

ມີມື້ນຶ່ງ ເຈົ້າເອີ້ນຂ້ອຍເຂົ້າມາໃກ້ໆແລະກະຊິບຢ່າງເບົາໆວ່າ ແມ່ກຳລັງຊິເປັນ...
ແນວທີ່ຫມໍເອງກໍຫມົດປັນຍາທີ່ຈະແກ້ໄຂຢູ່ງວຍາໃຫ້ຫາຍຖີ້ມໄດ້ ຂ້ອຍໄດ້ຍິນແລ້ວ
ກໍບໍ່ຢາກເຊື່ອປານໃດ ດ້ວຍວ່າເບິ່ງໄປເບິ່ງມາ ເພິ່ນກໍຍັງມີສະຕິສັມປັດຊະຍະຢູ່ຄືເກົ່າ
ແຕ່ຕໍ່ມາອີກບໍ່ດົນ ເລື້ອງທີ່ເຈົ້າບອກຂ້ອຍ ກໍເປັນຄວາມຈິງ ແມ່ຮ້ອງລຳທຳເພງຄັບອາຄານ
ແຕ່ງຫນ້າທາເລັບປານວ່າສາວນ້ອຍ ບໍ່ພໍເພິ່ນຍັງມັກອອກຈາກບ້ານເປັນປະຈຳ
ແລະເຫນືອສິ່ງອື່ນໃດຫມົດແມ່ນວ່າ ເພິ່ນເວົ້າຢູ່ບໍ່ຂາດສົບຂາດປາກ ມື້ເພິ່ນເປັນໃຫມ່ໆນັ້ນ
ເພິ່ນມັກກາຍມາທາງອາຄານຂ້ອຍ ແລະພາຂ້ອຍຍ່າງອ້ອມສູນ ຂ້ອຍກໍຍິນດີໄປນຳເພິ່ນ
ເພາະເຮັດແນວໃດກໍຄຶດວ່າ ມັນບໍ່ແມ່ນເລື້ອງລຳບາກຍາກເຂັນຫຍັງຍ່າງອ້ອມສູນຊື່ໆ

ແຕ່ແລ້ວຄືນນຶ່ງຂ້ອຍບໍ່ຄາດຝັນວ່າ ເພິ່ນຈະມາຫາຂ້ອຍໃນຂະນະທີ່ຂ້ອຍພວມນອນຫລັບຝັນດີຢູ່ນັ້ນ
ຂ້ອຍຮູ້ສຶກວ່າ ປະຕູຖືກສັ່ນຢ່າງແຮງ ແລະມີສຽງດັງໆສຳທັບມາພ້ອມບາດວ່າ "ໄຂປະຕູ
ບັກລູກເຂີຍ" ບໍ່ທັນທີ່ຂ້ອຍຈະລຸກຈາກບ່ອນຊ້ຳ ປະຕູທີ່ເຮັດດ້ວຍໄມ້ໃຜ່ສານແນບຜ້າຢາງ
ກໍເກືອບຈະຫລຸດອອກຈາກກັນ ເຫັນແນວນັ້ນຂ້ອຍກໍເລີຍຟ້າວບອກເພິ່ນວ່າ
"ຈັກຫນ້ອຍລູກຊິອອກໄປ" ເພິ່ນຈຶ່ງຄ່ອຍເຊົາດຶງ ເມື່ອຂ້ອຍອອກມາຫາເພິ່ນແລ້ວ
ເພິ່ນກໍພາຂ້ອຍຍ່າງກັບອາຄານເພິ່ນ ແລະຈົ່ມເລື້ອງລາວຕ່າງໆໃຫ້ຟັງ
ຊຶ່ງກໍບໍ່ຕ່າງຫຍັງກັບທີ່ເຈົ້າຮູ້ຄືວ່າ ລູກຜົວບໍ່ຮັກເພິ່ນ ຕອນທ້າຍເພິ່ນວ່າ
"ເຈົ້າກັບແມັດກັບແມ່ໄປປຸກເຮືອນຢູ່ຕ່າງຫາກນໍ" ຂ້ອຍກໍໄດ້ແຕ່ເອີໆໄປນຳ
ຄິດວ່າບໍ່ຂັດເພິ່ນນັ້ນລະດີທີ່ສຸດ

ຄືນນັ້ນເພິ່ນພາຂ້ອຍຍ່າງເລາະໄປທຸກເສັ້ນຂອງສູນ
ຫລິ້ນເອົາພວກຍາມແຕ່ລະອາຄານແນມນຳເປັນແຖວ
ແນວວ່າຍ່າງເລາະມຸສິມຸສາແຕ່ໄກ່ບໍ່ທັນຂັນພຸ້ນ ຕອນເພິ່ນເປັນຫັ້ນ ຮູ້ບໍ່?
ຂ້ອຍເປັນຫ່ວງເຈົ້າຫລາຍ ເຈົ້າມີແຕ່ໄຫ້ກັບໄຫ້
ມີທາງດຽວທີ່ຂ້ອຍພໍຊ່ອຍບັນເທົາຄວາມທຸກໂສກເຈົ້າໄດ້
ນັ້ນກໍຄືທຽວມາປອບໃຈໃຫ້ຄວາມອົບອຸ່ນເຈົ້າທຸກຄືນ
ທັງນັ້ນທັງນີ້ກໍເພື່ອເປັນເຄື່ອງຫມາຍຢັ້ງຢືນອີກເທື່ອນຶ່ງວ່າ ເຖິງແມ່ເຈົ້າຈະເປັນແນວໃດກໍຕາມ
ຂ້ອຍກໍບໍ່ເຄີຍຄິດທີ່ຈະຕີຕົວອອກຫ່າງຈາກເຈົ້າເລີຍ ກົງກັນຂ້າມ ຍິ່ງເຈົ້າຫມອງຫມົ່ນເທົ່າໃດ
ຂ້ອຍກໍຍິ່ງຮັກເຈົ້າຫລາຍຂຶ້ນເທົ່ານັ້ນ ຮູ້ບໍ່ທີ່ຮັກ? ບໍ່ມີໃຜລິຂິດຂີດເສັ້ນຊາຕາຊີວິດຂອງຕົນເອງໄດ້

ດັ່ງໃຈປາຖນາເພາະບໍ່ຮູ້ວ່າອາດິດປາງກ່ອນເຮົາໄດ້ສ້າງກັມຫນັກເບົາໃດໄວ້
ສິ່ງທີ່ຢູ່ໃນກຳມືເຮົາໃນຂະນະນີ້ກໍ່ຄືຕົວເຮົາເອງ ດັ່ງນັ້ນເຮົາຄວນຈະເຮັດໃຫ້ດີທີ່ສຸດນຳສິ່ງທີ່ເຮົາມີ
ແລ້ວຂ້ອຍຄຶດວ່າເຮົາຈະມີສ່ວນລິຂິດຊີວິດເຮົາເອງໄດ້ບໍ່ຫລາຍກໍຫນ້ອຍໃນທີ່ສຸດນັ້ນເອງ

ເລື້ອງຂອງແມ່ນີ້ ຕາມຂ້ອຍຈື່ ເພິ່ນເປັນດົນເຕີບ ຊົງຊີເຂົ້າເດືອນຫລືເດີນປາຍພຸ້ນລະ ຈຶ່ງຄ່ອຍເຊົາ
ແຕ່ກ່ອນຊີເຊົາກໍຕ້ອງຮ່ອນເຮ່ພະເນຈອນໄປພັກພິງອາໃສຢູ່ວັດ ແລະຫ້ອງຂ້າງຊົ່ວຄາວອີກດ້ວຍ

ປ.ລ. ຕາມໆພີ່ນ້ອງເຈົ້າທີ່ຢູ່ໃກ້ຊິດເຫດການວ່າ
ແມ່ທັ້ນຕອນຍັງສາວນັບວ່າເປັນສາວຊ່າສາວລືຢູ່ແຖວທ່າຫີນ ຜູ້ເພິ່ນບໍ່ມັກບໍ່ຖືກໃຈ
ເພິ່ນກໍບໍ່ຢາກເວົ້າຢາກລົມນຳ ຜູ້ເຂົາມາມັກເຂົາຄິດຊັງກໍເລີຍເຮັດສເນ່ບ້າບໍໃສ່
ຈຶ່ງຕ້ອງເປັນເວັນເປັນກັມແກ່ລູກແກ່ຜົວ ຕາບຈົນເທົ່າທຸກວັນນີ້ ເພາະຄືຊິດີກໍບໍ່ດີຈັກເທື່ອ
ສເນ່ບ້າບໍຄໍແຕກນີ້